ຈົດໝາຍນີ້

# ຂໍຝາກເຖິງອ້າຍ

ຈາກ ດອກເກດ

ຂອງຂວັນຈາກ
ລານຄ້ຳ

ໂຮມເລື່ອງສັ້ນ ໂດຍ ດອກເກດ

# ຈົດໝາຍນີ້

# ຂໍຝາກເຖິງອ້າຍ

ສາລະບານ


I ຄໍານໍາ

1 ຊ່ອຍແດ່ ! ຊ່ອຍແດ່ !

9 ຍາມໄກ

17 ບໍ່ເຊື່ອ

27 ບາງຜູ້ທີ່ເຮົາຄຶດນັກ

34 ໂລກກິນ

41 ຈົດໝາຍນີ້ ຂໍຝາກເຖິງອ້າຍ

58 ຝົນ

65 ລົມຝົນລົມປ່ວງ

ໂຣມເລື່ອງສັ້ນ  ຈົດຫມາຍນີ້ ຂໍຝາກເຖິງອ້າຍ

ໂດຍ  ດວງເດືອນ ບຸນຍາວົງ

ທະບຽນອະນຸຍາດ: 316/ກວ.ນວ

ຈຳນວນພິມ  3,000 ຫົວ

ພິມຄັ້ງທີ 1, ມີນາ 2004

ພິມທີ່

ໂຮງພິມມັນທາຕຸລາດ, ນະຄອນຫລວງວຽງຈັນ

ຮູບປະກອບ

ບັນນາທິການ

ຈັດຫນ້າ ອອກແບບປົກ  ແລະຈັດຈຳຫນ່າຍ ໂດຍ

ບໍລິສັດ ຫຸ້ນສ່ວນ ດອກເກດ ຈັດພິມ ຈຳກັດ

ດອກເກດ

DokkeD

Publishing Co., Ltd

# ຄຳນຳ

ອັນວ່າ ດອກເກດຕົ້ນ ໃບເນື່ອງຫນາມຫນາ
ແຕ່ຫາກ ຫອມເຫລືອຫລາຍ ຄູ່ຄົນຍໍຍ້ອງ

*ມະຫາ ແກ້ວ ຣາຊວົງ*

ອາດແມ່ນ ອິດທິພົນທາງຈິດໃຈ ຈາກບົດກອນເທິງນີ້ ຂອງຍາພໍ່ ມະຫາແກ້ວ ແລະໃນຄອບຄົວ ພວກເຮົາ ແມ່ມັກປູກຕົ້ນ ດອກເກດ ໄວ້ແຈຮົ້ວຫນ້າບ້ານ ຕົກຍາມແລງ ກິ່ນຫອມຈະໂຮຍມາ ຮອດເຊຽເຮືອນ... ເມື່ອນ້ອງສາວຄົນທີຫ້າຂອງຄອບຄົວ ຄິດຈະຂຽນ ນະວະນິຍາຍ ໄປລົງຫນັງສືພິມລາຍວັນ ກໍຈຶ່ງເລືອກເອົາ "ດອກເກດ" ເປັນນາມປາກກາຂອງຕົນ.

ນັກຂຽນ " ດອກເກດ" ເກີດຂຶ້ນແລ້ວ ! ເກີດຂຶ້ນໄດ້ແນວໃດ ? ກືກຳເນີດເກີດຂຶ້ນໃນຄອບຄົວຂອງນັກປາດອາຈານ ພໍຈື່ຄວາມໄດ້ ກໍເຫັນພໍ່ ນັ່ງຂຽນຫນັງສື ແຕ່ງກາບກອນ ແລະມີລູກສິດ ທີ່ເປັນ ຄູອາຈານຈາກຫລາຍສະຖາບັນ ທັງໃນ ແລະນອກປະເທດ ມາຫາ ຂໍປຶກສາຮຽນຮູ້ນຳ ບວກກັບໃນຍຸກກ່ອນຫນ້ານັ້ນ ອາຍຸໄດ້ແປດເກົ້າປີ ກໍໄດ້ອ່ານທັງເລື່ອງສັ້ນ ເລື່ອງຍາວ ພາສາໄທທີ່ "ດວງຈຳປາ" ຜູ້ເປັນເອື້ອຍໃຫຍ່ ເອົາມາອ່ານ ແລະຕໍ່ມາກໍໄດ້ເປັນເລຂາ ຈົດກາຍເລື່ອງຂອງເອື້ອຍໃຫຍ່ຜູ້ນີ້ "ດອກເກດ" ຈຶ່ງບໍ່ອາດມິດເສີຍ ຢູ່ໄດ້. ອາການ "ຄັນມື" ເກີດຂຶ້ນແລ້ວ "ຮົ້ວດອກຮັກ" ນະວະນິຍາຍ ຂະຫນາດຫລາຍສິບຕອນ ກໍທະຍອຍລົງໃນຫນ້າ ນ.ສ.ພ.ຊາດລາວ ລາຍວັນ ສະທ້ອນພາບຊີວິດນັກຮຽນກິນນອນ ຢູ່ສະຖາບັນ ການສຶກສາວິຊາຄູດົງໂດກ (ຊື່ເດີມ) ໃນຊ່ວງປີ 1966-68 ຢ່າງທັນອົກ ທັນໃຈ. ຫມູ່ຄູ່ ທີ່ເປັນນັກຮຽນມັດທະຍົມສ້າງຄູ ທັງຍິງຊາຍ ຕ່າງກໍ ຍາດກັນເອກອ້າງວ່າຕົນແມ່ນຕົວລະຄອນນັ້ນ ນີ້ ໃນເລື່ອງຂອງ "ດອກເກດ", ນັ້ນແມ່ນເຫດຜົນທີ່ຂະເຈົ້າ ເພິ່ງພໍໃຈ ແລະຢາກຕິດຕາມ ອ່ານ "ຮົ້ວດອກຮັກ". ຄວາມຈິງກໍຄື ບໍລິເວນອ້ອມຮອບຫໍພັກນັກຮຽນ ຍິງເວລານັ້ນ ເພິ່ນໄດ້ປູກຕົ້ນດອກຮັກເຕັມໄປຫມົດ ແລະ "ດອກເກດ" ກໍຊ່າງຈັບເອົາບຸກຄະລິກຂອງ ຫມູ່ຄູ່ບາງຄົນ ປະສົມເຂົ້າໄປນຳຕົວ

ລະຄອນທີ່ເຫນັງຕຶງຢູ່ແຕ່ລະວັນ ໃນນິຍາຍເລື່ອງທຳອິດນີ້ ຢ່າງ ຮອບຄອບ ເວົ້າໄດ້ວ່າທຸກຄົນທີ່ອ່ານ ຄິດວ່າຕົວລະຄອນຄືຕົນ ແຕ່ກໍຮູ້ວ່າ ບໍ່ແມ່ນທັງຫມົດ ແຕ່ທັງຫມົດໃນເລື່ອງ ກໍຍັງແມ່ນຊີວິດ ຂອງເອົາເຈົ້າ ມີຮັກ ມີມ່ວນ ແລະຕຶງຊຶມໆ ກັນຕາມພາສາໄວຮຽນ ໄວຮັກ ເອີ້ນວ່າເປັນນິຍາຍເລື່ອງທຳອິດໃນແວດວົງນັກຮຽນນັກສຶກສາ. "ດອກເກດ" ຂຽນເລື່ອງນີ້ ໃນເວລາທີ່ມີອາຍຸ 19 ປີ ພໍດີ. ຄວາມຄິດສ້າງສັນ ຢາກນຳເອົາບົດຮຽນຊີວິດ ຄວາມຮັກແລະການຮຽນຊ້ອນເຂົ້າໃນນິຍາຍ ເກີດຈາກປະສົບການ ແລະການສັງເກດສະພາບແວດລ້ອມອັນແທ້ຈິງ ໃນການເປັນນັກຮຽນກິນນອນຂອງ "ດອກເກດ" ເອງ. ໃນລະຍະ ເວລາ 5-6 ປີ ທີ່ຢູ່ກິນນອນ ແລະຮຽນຢູ່ດົງໂດກ "ດອກເກດ" ມີຂໍ້ມູນໃຫ້ເລືອກຢ່າງອຸດົມສົມບູນ. ຈິນຕະນາການ ຊ່ອຍນຳພາໄປສູ່ຄວາມໄຝ່ຝັນ ແລະອຸດົມຄະຕິທີ່ຈະໃຫ້ປາຍປາກກາເປັນສິ່ງຊ່ອຍຕັກເຕືອນ ແລະຫລໍ່ຫລອມໄວຫນຸ່ມຍິງຊາຍໃນຍາມນັ້ນ ໃຫ້ຮູ້ຄຶດນຳການຮຽນ ແລະເວລາດຽວກັນກໍຕ້ອງລະມັດລະວັງ ເລື່ອງຄວາມຮັກ ການພັດພາກ ຜົນສຳເລັດ ຄວາມຜິດຫວັງ ແລະກຳລັງໃຈ.

ຈາກເລື່ອງທຳອິດໃນປີ 1966 ດອກເກດ ສ້າງຜົນງານເປັນລະຍະ ຈຸດສຸມຄື ປີ 1970-74 ແລະລະຫວ່າງ 1985- 92 , ໄດ້ໂຮມຈັດພິມມາແລ້ວຄື "ຈົດຫມາຍຈາກຈັນດາ" ໃນ "ລູກຊາຍໃຜ?" ຈັດພິມໂດຍ ໄຜ່ຫນາມ 1975, " ດອກສຸດທ້າຍຫລືງາມ " ພິມຄັ້ງທີສອງ 1995 "ອາກັບແຫ່ງ ພົງໄພ" (ເລື່ອງຍາວ ທີ່ຖືກນຳໄປສ້າງເປັນລະຄອນວີດີໂອໃນປີ1997 ໂດຍກົມຮູບເງົາ ກະຊວງ ຖະແຫລງຂ່າວ ແລະວັດທະນະທຳ) ນອກນັ້ນ ມີໂຮມຢູ່ໃນຊຸດຕ່າງໆ ກັບນັກຂຽນອື່ນ ຄືເລື່ອງ "ທຳບຸນໄດ້ບຸນ" ໃນ "ກຸຍກິ່ນສາວຄາວຜູ້ຊາຍ" ປາໄນ-ດວງຈຳປາ, ພຶດສະພາ 1971 " ຊ່ອຍແດ່-ຊ່ອຍແດ່ " ໃນ "ທະເລຊີວິດ", ປາໄນ-ດວງຈຳປາ, ກັນຍາ 1971; "ທາງເລືອກຂອງ ສິດທິເດດ" ໃນ "ຫນາວໃຈ", ພຶດສະຈິກາ 1971, " ບໍ່ເຊື່ອ " ໃນ " ລືມ... ສັນຍາ " ຕຸລາ 1973 ; " ໂລກກົມ" , " ລົດເມບໍ່ປະຈຳທາງ" ໃນ " ບໍ່ບານກໍຫອມ", ພະຈິກ 1972, "ກົມ" ໃນ "ຟ້າໃຫມ່", ພຶດສະພາ

1974, ແລະອີກຫລາຍເລື່ອງລົງເປັນປະຈຳ ໃນໄຜ່ໜາມລາຍເດືອນ ກັບວາລະສານ "ນາງ" ແຕ່ປີ 1973 ເຖິງ 1975 ໂຮມແລ້ວ ປະມານ 30 ກວ່າເລື່ອງ.

ຜົນງານໃນຊຸດ " ຈົດໝາຍນີ້ ຂໍຝາກເຖິງອ້າຍ" ຈະນຳພາ ທ່ານຜູ້ອ່ານໄປພິສູດວ່າຄວາມຄຶດສ້າງສັນ ທີ່ຊີວິດແທ້ ຂອງຄົນຜູ້ເປັນ ນັກສຶກສາ ແລະນັກສັງເກດຊີວິດ ໄດ້ສັງຣອມອອກມາເປັນບົດເລື່ອງ ນິຍາຍ ແຕ່ງຂຶ້ນຄືແນວໃດ .

"ຊ່ອຍແດ່ ຊ່ອຍແດ່ "

ເປັນປະສົບການຈາກເຫດການນ້ຳຖ້ວມຫລວງປີ 1966 ຊຶ່ງ ຫລາຍ ພັນຄອບຄົວຢູ່ວຽງຈັນ ແລະຫລາຍໆແຂວງໃນທົ່ວປະເທດ ຈະບໍ່ມີວັນ ລືມໄດ້. ອາດເປັນສ່ວນນ້ອຍໆ ຂອງເຫດການທີ່ໃຫຍ່ຫລວງ ແຕ່ກໍເປັນ ພາບບັນທຶກທີ່ບອກເຖິງຄວາມຮູ້ສຶກຫ່ວງໃຍ ນ້ຳໃຈໄມຕີຕໍ່ກັນ ແລະກັບ ຂອງມະນຸດແລະສັດໂລກອື່ນໆ.

"ຍາມໄກ " ເລື່ອງທຳອິດທີ່ " ດອກເກດ" ບອກເລົ່າເຖິງຊີວິດ ການເປັນນັກສຶກສາຢູ່ຕ່າງແດນ ຄວາມຜູກພັນຢູ່ກັບບ້ານເກີດ ເມືອງ ນອນ ຊຶ່ງມອບໝາຍໃຫ້ຄວາມຮັກເປັນສີ່ກາງ ແຕ້ມຕື່ມສີສັນຊີວິດ ໄວໜຸ່ມໄວຣຽນໃຫ້ແທດກັບຊີວິດຈິງທີ່ສຸດ ແລະເປັນອະນິດຈັງທີ່ສຸດ. ນັ້ນຄືຄວາມຮັກຂອງ "ອ້າຍສູນ" ກັບ "ທັດສະພອນ" ທີ່ຮັດແໜ້ນ ຍາວນານກວ່າສອງປີແລະຜູກມັດ "ທັດສະພອນ" ດ້ວຍ ເງື່ອນໄຂອັນ ໜາແໜ້ນວ່າ ນາງຈະຕ້ອງຊື່ສັດຕໍ່ຊາຍຜູ້ນີ້ ຈົນບໍ່ຫລຽວແລຊາຍໃດ ອີກ. ບາດແລ້ວ ພຽງແຕ່ສາມເດືອນທີ່ໄກກັນ" ອ້າຍສູນ ກໍຄວງ ຜູ້ສາວອື່ນ " ແຕ່ແນ່ນອນ "ດອກເກດ" ບໍ່ຍອມໃຫ້ ຕົວລະຄອນຂອງຕົນ ເປັນຍິງໃຈໝັ່ນ." ທັດສະພອນ ບໍ່ຍອມເຊື່ອ ພຽງຄຳບອກເລົ່າ ຂອງ ນ້ອງສາວ..."

ຕາມທຳມະດາ ທີ່ຜ່ານມາ ຜູ້ອ່ານລາວ ມັກໄດ້ສຳຜັດກັບ ບົດເລື່ອງທີ່ວ່າ ບ່າວສາວທີ່ພວມຮັກກັນຄູ່ນຶ່ງ ຕ້ອງພາກຈາກກັນ ຍ້ອນການສຶກສາ ຫລືວຽກງານ ນັ້ນແມ່ນຝ່າຍຊາຍທີ່ຈາກໄປ ແລ້ວ ກໍຈະພົບຮັກໃໝ່ຢູ່ຕ່າງແດນຫລືຕ່າງແຂວງ. ແຕ່ "ຍາມໄກ" ຂອງ "ດອກເກດ" ເປັນເລື່ອງທຳອິດ ທີ່ກ່າວເຖິງການຈາກ ແບບຝ່າຍຍິງ

ໄປສຶກສາ ຢູ່ແດນໄກແລ້ວຜູ້ຢູ່ບ້ານພື້ ເປັນຜູ້ປ່ຽນໄປ. ຫມາຍຄວາມວ່າ "ດອກເກດ" ບໍ່ລືມເຫດການສຳຄັນຂອງຍຸກສະໄຫມ ແຫ່ງຄວາມປ່ຽນແປງ ນັ້ນຄື ແມ່ຍິງ ເລີ່ມມີໂອກາດເງື່ອນໄຂໄປຮຽນຕໍ່ ນັບມື້ນັບຫລາຍຂຶ້ນ ເພື່ອກ້າວໄປສູ່ຄວາມສະເຫມີພາບຍິງຊາຍໃນທຸກຂົງເຂດຊີວິດ. ແນ່ນອນ "ດອກເກດ" ເອງໄດ້ມີໂອກາດນັ້ນ ຈຶ່ງສາມາດກອດເອົາພາບຊີວິດຈິງ ຂອງນັກສຶກສາ ຢູ່ຕ່າງແດນ ອອກມາໃຫ້ຜູ້ອ່ານສຳຜັດນຳ.

"ບໍ່ເຊື່ອ" ສະເຫນີພາບນັກສຶກສາລາວ ຢູ່ນະຄອນປາຣີສ ປະເທດຝຣັ່ງອີກຢ່າງກື້ກ້ອນຕື່ມ. ຈາກ ບົດຂຽນພຽງ 4-5 ຫນ້າ ຕີພິມນີ້ ຜູ້ອ່ານຈະຫລຽວເຫັນພາບບ່າວສາວ ນັກສຶກສາລາວຢູ່ຝຣັ່ງຢ່າງ ເຕັມຕາ. ເປັນທັມນຽມຂອງນັກສຶກສາຢູ່ຕ່າງປະເທດ ທີ່ເອົາກາລະໂອກາດປີໃຫມ່ລາວເປັນເຫດການ ສຳຄັນຂອງປີ ເພື່ອພົບພໍ້ສັງສັນກັນ ໃນນັ້ນ ເຮົາຈະເຫັນໄດ້ວ່າ ມີລາຍການສະແດງຟ້ອນ ພິທີບາສີ ແລະອື່ນໆ. ດ້ວຍເຫດການຈິງເຫລົ່ານີ້ "ດອກເກດ" ຈັດສັນໃຫ້ຕົວລະຄອນຂອງເພິ່ນ ສະແດງບົດບາດທີ່ສົມຈິງ ຈົນຫລາຍຄົນ ສົງໄສວ່ານັ້ນແມ່ນຊີວິດຈິງຂອງ "ດອກເກດ" ເອງບໍ? ຕາມເຄີຍ ຕົວລະຄອນເອກຕ້ອງເປັນນັກສຶກສາຍິງງາມ ຫນ້າຮັກ ມີຄວາມສາມາດຫລາຍດ້ານ ພ້ອມທັງມີໃຈຫນັກແຫນ້ນ ບໍ່ເຊື່ອຄົນງ່າຍ (ຂນາດບໍ່ເຊື່ອອ້ອຍຍັງຊ້ຳໃຈຊ່ຳນີ້ ກ້າເຊື່ອເດ້ ອ້າຍພິນ ອ້ອຍຈະຊ້ຳໃສແດ່ ?)

ກ້າທ່ານຜູ້ອ່ານ ຈະສັງເກດໃຫ້ດີ ເຕັກນິກການຂຽນໃນເລື່ອງນີ້ແມ່ນແບບໃຫມ່ອີກແບບນຶ່ງ ຄືຕົວລະຄອນເອກ ເປັນຜູ້ເລົ່າເຫດການໂດຍເວົ້າຕໍ່ຕົວລະຄອນທີສອງ ທີ່ເອີ້ນວ່າ "ເຈົ້າ" ຄ້າຍຄືວ່າ ຂຽນຈົດຫມາຍຫາ ແຕ່ບໍ່ແມ່ນ, ກືວ່າເປັນແບບທີ່ຊວນຕິດຕາມດີ, ຜູ້ຂຽນຕ້ອງໃຊ້ຄວາມພະຍາຍາມ ສຸດຂີດ ຈຶ່ງເຮັດໃຫ້ຕົວລະຄອນສອງຕົວ ກົມກືນໄປກັບພາບລວມຂອງກຸ່ມຄົນທີ່ກ່າວເຖິງໃນບົດເລື່ອງ. ເຕັກນິກນີ້ເຮັດໃຫ້ບົດສົນທະນາແຫນ້ນເຂົ້າ ເກືອບຄືບົດລະຄອນ ແລະຜູ້ອ່ານຈະຮູ້ສຶກຢູ່ໃນແວດວົງ ຂອງເຫດການນັ້ນ. ເລື່ອງນີ້ "ດອກເກດ" ຂຽນຂະນະທີ່ຫາກໍກັບມາແຕ່ປະເທດຝຣັ່ງໃຫມ່ໆ ມາເປັນ ອາຈານສອນ ຢູ່ດົງໂດກ, ແນ່ນອນ "ດອກເກດ" ໄດ້ລະບາຍສີຄວາມຊົງຈຳ

ຈາກປາຣີ ລົງໃສ່ໜ້າເຈ້ຽ ຢ່າງສົດໆຮ້ອນໆ.

ກັບມາຢູ່ດົງໂດກບາດນີ້ "ດອກເກດ" ບໍ່ແມ່ນນັກຮຽນ ນັກສຶກສາ ອີກແລ້ວ ແຕ່ເປັນຄູສອນ.

"ນາງຜູ້ທີ່ເຮົາຄຶດນັກ" (ໄຜ່ໜາມ, 1973) ກອດເອົາບັນຍາກາດການຮຽນ ໃນສະຖາບັນສ້າງຄູດົງໂດກ ຊຶ່ງຍົກລະດັບຂຶ້ນ ເປັນວິທະ ຍາໄລຊັ້ນສູງ. ບາດນີ້ "ດອກເກດ" ກ້າຫານ ທີ່ຈະໃຫ້ແງ່ຄິດ ແບບວິຈານ ລົງໄປໃນບົດເລື່ອງ. "ນັນທະວອນ ນາງຜູ້ທີ່ເຮົາຄຶດນັກ" ເປັນພຽງຍິງສາວ ຊຶ່ງເກີດມາມີບຸນວາສະໜາ ໄດ້ຢູ່ໃນກອງເງິນ ກອງຄຳ ສຸກສຳບາຍຈົນບໍ່ຮູ້ວ່າ ຜູ້ອື່ນທີ່ທຸກຍາກນັ້ນ ທຸກຫຍັງແດ່ ທຸກເປັນແບບໃດ "ນາງນັບກົດລະບຽບໃນຫໍພັກບໍ່ໄດ້ ນາງບໍ່ສາມາດຫລັບນອນໃນຕຽງນ້ອຍໆ ທີ່ຄັບແຄບຂອງຫໍພັກຍິງນັ້ນໄດ້... ນາງອອກຈາກສະຖາບັນທີ່ຊາວໜຸ່ມຫລາຍຮ້ອຍຄົນໄຝ່ຝັນທີ່ຈະເຂົ້າມາຮຽນນັ້ນຢ່າງງ່າຍດາຍ ຄືອອກຈາກເຮືອນໄປເບິ່ງຊີເນ ໄປຕະຫລາດ ເພາະທີ່ນາງ ເຂົ້າມານັ້ນ ກໍຍ້ອນຜູ້ໃຫຍ່ຢາກໃຫ້ເຂົ້າ ນາງເຂົ້າມາລອງ...ນາງບໍ່ຍອມຕໍ່ສູ້ຫຍັງເລີຍ... ກ້າເກີດຟ້າປີ້ນດິນຫງາຍປ່ຽນເຈົ້າປ່ຽນນາຍຂຶ້ນມາ ບຸນວາສະໜາ ຂອງພໍ່ແມ່ນາງໝົດໄປ ນາງຈະເຮັດຈັ່ງໃດ? ຄົງບໍ່ຕ້ອງຊ້ຳຕື່ມອີກວ່າ ເມື່ອມີການປ່ຽນແປງ ດັ່ງວ່າເກີດຂຶ້ນ ຄົນຈຳນວນບໍ່ໜ້ອຍເປັນຄື "ນັນທະວອນ" ບໍ່ສາມາດຈະປັບຕົວເຂົ້າກັບສະພາບການ ບໍ່ສາມາດຈະຫັນປ່ຽນຊີວິດ...

ຍັງບໍ່ໝົດເທົ່ານັ້ນ ຕົວລະຄອນທີ່ເປັນຍິງສາວນັກສຶກສາ "ມາໄລສີ" ສາວງາມຜູ້ຊີງສະເໜ ທີ່ກ້າວເຂົ້າມາໃນສະຖາບັນແຫ່ງນີ້ ດ້ວຍເຫລ່ຫລ່ຽມ ກົນໂກງ ຂອງອະທິບໍດີໜຸ່ມຄົນນຶ່ງ "*ນາງຍາດເອົາເບັ້ຽລ້ຽງ ບ່ອນຢູ່ ບ່ອນຮຽນ ຂອງນັກຮຽນຜູ້ນຶ່ງ ຊຶ່ງອາດຈະທຸກຍາກກວ່ານາງ ບໍ່ມີໃຜອຸ້ມຊູ ນັບວ່ານາງເປັນຄົນໜ້າດ້ານໜ້າເຫລື້ອມທີ່ສຸດ...*" *ດອກເກດ*" ພະຍາຍາມຈະບອກຫຍັງແກ່ຜູ້ອ່ານ ? ບໍ່ວ່າຍຸກສະໄໝໃດ ນັກຮຽນທີ່ເຂົ້າໄປນັ່ງ ຍ້ອນເປັນຄົນພິເສດ ບໍ່ສົນໃຈໃນການຮຽນຢ່າງແທ້ຈິງ ເຂົ້າໄປພຽງເພື່ອຈະອວດ

ອ້າງວ່າໄດ້ເຂົ້າໄປໃນສະກາບັນສຶກສາອັນມີກຽດ, ກໍ່າວ່າ " ເຂົາ " ອາຈານ ຫນຸ່ມທີ່ເປັນຕົວແທນໃຫ້ແກ່ ຄູອາຈານໃນອຸດົມຄະຕິ ຈະບໍາເພັນຕົນເປັນຄູທີ່ດີ ຊື່ສັດຕໍ່ຫນ້າທີ່ " ນາງມາໄລສີ ຈະເສັງຂຶ້ນຫ້ອງໄດ້ບໍ່ນໍ້ ທ້າຍປີນີ້ ? ຫລືຈະຫລູດຟົ້ງອອກໄປເລີຍ ຫລື ຈະ ... ? ນັ້ນມັນແລ້ວແຕ່ຈິດສໍານຶກໃນອາຊີບການເປັນຄູຂອງເຂົາຕ່າງຫາກ"

ໃນ " ໂລກກົມ " ດອກເກດ ໄດ້ເຮັດຫນ້າທີ່ຂອງນັກຂຽນທີ່ສະທ້ອນ ພາບສັງຄົມບໍ່ວ່າດ້ານລົບ ຫລື ດ້ານບວກໃນເວລາດຽວກັນ ກໍໄດ້ສະແດງຈຸດຢືນຂອງຄູຜູ້ຮັກອາຊີບ.

ເຖິງແມ່ນ " ໂລກກົມ " ສຸດລົງ ດ້ວຍຄໍາຖາມທີ່ຍັງບໍ່ມີຄໍາຕອບ ແຕ່ຜູ້ອ່ານ-ສັງຄົມ ຄົງໄດ້ຄຶດແລ້ວ ແລະພໍ້ແລ້ວຊຶ່ງຄໍາຕອບນັ້ນ.

ຈາກຊຸດນັກຮຽນ ນັກສຶກສາ ແວດວົງ ທີ່ຕົນກະຫນັດແລ້ວ "ດອກເກດ" ກໍກ້າວອອກສູ່ຍຸກ ແຫ່ງສັງຄົມວິຈານຢ່າງແທ້ຈິງ. " ຝົນ " (1973 , ໄຜ່ຫນາມ) ເປັນແບບຢ່າງອັນເດັ່ນແຈ້ງ. ເມື່ອສະພາບການ ບ້ານເມືອງ ເຂົ້າສູ່ຍຸກແຫ່ງຄວາມເຫັນແກ່ຕົວ ຍາດແຍ່ງຊີງດີ ຜູ້ຄົນ ໃນສັງຄົມຖືກແບ່ງແຍກ ໂດຍການະທາງເສດຖະກິດ ຜູ້ທຸກແຮ່ງທຸກ ຜູ້ຮັ່ງແຮ່ງຮັ່ງ ຄວາມມີນໍ້າໃຈຕໍ່ກັນແບບຊາວພຸດແທ້ໆຫມົດໄປ. ຜູ້ຂຽນ ໄດ້ປຽບທຽບລະຫວ່າງ ພົນທະຫານຊັ້ນສິບໂທ ຜູ້ຊື່ສັດ ມີຊີວິດ ຂາດໆເຂີນໆ ກັບທ່ານໂກໂລແນນ (ພັນເອກ) ຜູ້ມີອໍານາດ ແຕ່ຂາດນໍ້າໃຈ ລະຫວ່າງຜູ້ທີ່ພວມຕ້ອງການເງິນພຽງຫນ້ອຍດຽວພໍຊື້ຢາ ປົວລູກ ກັບຜູ້ທີ່ພວມເສບສຸຣານາຣີ ໃນຮ້ານອາຫານລາຄາແພງ ແມ່ນຫຍັງ ກໍອາດເກີດຂຶ້ນໄດ້ ເປັນຫຍັງ ເປັນຫຍັງ ຄົນເກີດມາ ໃນຜືນແຜ່ນດິນດຽວກັນ ຈຶ່ງແຕກຕ່າງກັບປານນີ້ ? ຄໍາຖາມນີ້ "ດອກເກດ" ໄດ້ຕັ້ງຂຶ້ນເພື່ອຫາຄໍາຕອບຈາກສັງຄົມ ໃຫ້ແກ່ສັງຄົມ .

*" ເຂົາຄ່ອຍໆປ່ອນມືລົງກົງໂສ້ງທີ່ຊຸ່ມປຽກ ອາ !*
*ພຽງແຕ່ເຂົາຊິດຶງວັດຖຸກົມໆແຂງໆ ນັ້ນອອກມາ*
*ແລ້ວແກວ່ງເຂົ້າໄປ ທຸກສິ່ງທຸກຢ່າງຈະວອດວາຍ*
*ເຫລືອແຕ່ຊາກສົບອັນ ເຮີຮ້າຍຂອງພວກເຂົາເຫລົ່ານັ້ນ... "*

ເບິ່ງຄືວ່າ "ດອກເກດ" ພະຍາຍາມຈະເຕືອນແລ້ວວ່າ

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນໍາ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ